# ENDING VIOLENCE AGAINST WOMEN

## & Mainstreaming Gender into the National Development Agenda in Lao PDR

(Khan Hom Project)

## PROJECT BACKGROUND

Violence against women and girls (VAWG) and gender-based violence (GBV) are serious violations of human rights that are increasingly visible in all sections of society and Lao PDR is no exception.

The 2014 National Survey on Violence Against Women found that **over 30% of ever-partnered women in Lao PDR have experienced at least one of the three types of violence** (physical, sexual and emotional) by a male partner in their lifetime. This is a symptom, among other things, of discriminatory beliefs and customs perpetuating traditional gender roles.

The COVID-19 pandemic has also exacerbated pre-existing gender inequalities that foster violence. Emerging evidence from the pandemic indicates an increase in GBV in Lao PDR. Measures put in place to mitigate the spread of COVID-19, including lockdowns, social distancing and other restrictions on movement, increase the risk of domestic violence, sexual exploitation and other harmful practices, such as early marriage and early pregnancy.

Therefore, there is a need to strengthen the government's policy frameworks to align with international obligations and standards, develop clear guidelines for relevant sectors to provide quality coordinated services to GBV survivors, and improve coordination of governance.

Under this KOICA-supported joint project, UNDP and UNFPA will support the government uphold its international obligations to prevent and respond to GBV, including under the Convention on the Elimination of All Forms of Discrimination Against Women (CEDAW), align with KOICA's Gender Equality Mid Term Strategy 2016-2020, and respond and recover from the COVID-19 pandemic.

## PROJECT SUMMARY

| | |
|---|---|
| **Duration:** | 2020-2024 (48 months) |
| **Geographic coverage:** | National and sub-national (selected provinces) |
| **Focus areas:** | Health, social, justice and policing sectors and governance |
| **Implementing partners:** | Lao Women's Union (LWU) & National Commission for the Advancement of Women, Mothers and Children (NCAWMC) |
| **Supported by:** | KOICA, UNDP and UNFPA in cooperation with PMC (KDS & Tacteen Naeil), UN agencies, CSOs |
| **Funding:** | KOICA: 2.7 million USD *(1.6 million through UNDP, 1.1 million through UNFPA)* |














# ENDING VIOLENCE AGAINST WOMEN

## & Mainstreaming Gender into the National Development Agenda in Lao PDR

(Khan Hom Project)

## WHAT DOES THIS PROJECT AIM TO ACHIEVE?

### PREVENTION:

Strengthened national policies and institutional framework to **prevent and increase protection** from VAWG.

### RESPONSE:

Strengthened **capacity and coordination** of social, health and justice sectors and key agencies at national and provincial levels with increased access of women and girl survivors of violence to **quality coordinated services.**

### PARTICIPATION:

Greater inclusion of and participation by survivors of GBV in policy dialogues to ensure services are **survivor-centred** and **based on human rights.**








## HOW WILL THESE BE ACHIEVED?

### UNFPA

1. Providing technical support to the development and implementation of the second **National Action Plan on Combating Violence Against Women** (2021-2025) (EVAW National Action Plan).
2. Providing technical support to the development and implementation of the fourth **National Plan of Action for Gender Equality (2021-2025)** (Gender Equality National Plan of Action).
3. **Integrating** the EVAW National Action Plan and Gender Equality National Plan of Action into 9th National Socio-Economic Development Plan (2021-2025) and sectoral plans at national and sub-national levels.
4. Developing comprehensive and inclusive **National Guidelines for Standard Operational Procedures** (SOPs) for prevention and response to VAWG in the health and social sectors.

### UNDP

1. Establishing a platform for **policy dialogue** with key relevant stakeholders, ensuring that the experiences of survivors are respected and reflected.
2. **Raising awareness** of the relevant institutions of the justice and policing sectors on gender issues and **strengthening their capacity** and prevent and respond to VAWG.
3. Conducting research and surveys to support **data collection** and **monitoring and reporting** on progress of Lao PDR.
4. Organizing an **international conference and exchange programme** with experts from ROK and neighbouring countries.

**CONTACT INFORMATION:**
United Nations Development Programme (UNDP) Lane Xang Avenue P.O. Box 345 Vientiane, Lao PDR | Email: info.la@undp.org | Tel: +856 (0) 21 267 777
United Nations Population Fund (UNFPA) Lane Xang Avenue, P.O. Box 345 Vientiane, Lao PDR | Email: vorabouth@unfpa.org | Tel: 856 (0) 21 267718

# ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ

### ແລະ ເຊື່ອມສານບົດບາດຍິງ-ຊາຍເຂົ້າໃນແຜນພັດທະນາແຫ່ງຊາດຂອງ ສປປ ລາວ

(ໂຄງການຄັນຮົມ)

## ຄວາມເປັນມາໂຄງການ

ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ (VAWG) ແລະ ຄວາມຮຸນແຮງບົນພື້ນຖານທາງເພດ (GBV) ແມ່ນການລະເມີດສິດທິມະນຸດຢ່າງຮຸນແຮງ ເຊິ່ງເພີ່ມຂຶ້ນ ແລະ ເຫັນໄດ້ຢ່າງຊັດເຈນໃນທຸກພາກສ່ວນຂອງສັງຄົມ, ລວມທັງ ສປປ ລາວ ເອງກໍບໍ່ຍົກເວັ້ນ.

ໃນປີ 2014ໄດ້ມີການສຳຫຼວດຄວາມຮຸນແຮງຕໍ່ແມ່ຍິງໃນທົ່ວປະເທດ ແລະ ຜົນການສຳຫຼວດສະແດງໃຫ້ເຫັນວ່າ ແມ່ຍິງຢູ່ໃນ ສປປ ລາວ ຫຼາຍກວ່າ 30% ເຄີຍຖືກໃຊ້ຄວາມຮຸນແຮງຢ່າງໜ້ອຍໜຶ່ງໃນສາມປະເພດຄວາມຮຸນແຮງ ເຊັ່ນ: (ຄວາມຮຸນແຮງທາງດ້ານຮ່າງກາຍ, ຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງທາງຈິດໃຈ)ຈາກຄູ່ຮັກເພດຊາຍໃນຕະຫຼອດຊີວິດຂອງພວກເຂົາ. ນີ້ແມ່ນໜຶ່ງໃນຫຼາຍໆຮູບແບບຂອງການຈຳແນກ ທາງດ້ານຄວາມເຊື່ອ ແລະ ປະເພນີການເລືອກປະຕິບັດ ທີ່ສືບເນື່ອງມາຈາກ ບົດບາດຍິງ-ຊາຍ ທີ່ມີດັ້ງເດີມ.

ການແຜ່ລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ຄວາມບໍ່ສະເໝີພາບ ລະຫວ່າງ ຍິງ-ຊາຍ ທີ່ມີຢູ່ກ່ອນໜ້ານີ້ເພີ່ມຂຶ້ນ ຊຶ່ງກໍ່ໃຫ້ເກີດມີຄວາມຮຸນແຮງ. ຫຼັກຖານທີ່ພົບເຫັນໃນລະຫວ່າງການແຜ່ລະບາດຂອງພະຍາດໄດ້ຊີ້ໃຫ້ເຫັນວ່າຄວາມຮຸນແຮງບົນພື້ນຖານທາງເພດໃນ ສປປ ລາວ ໄດ້ເພີ່ມຂຶ້ນ. ມາດຕະການຕ່າງໆ ເພື່ອຫຼຸດຜ່ອນການແຜ່ລະບາດຂອງພະຍາດ COVID-19 ລວມທັງການ Lockdowns, ການເວັ້ນໄລຍະຫ່າງທາງສັງຄົມ ແລະ ຂໍ້ຈຳກັດໃນການເດີນທາງ, ໄດ້ເພີ່ມຄວາມສ່ຽງຕໍ່ການໃຊ້ຄວາມຮຸນແຮງໃນຄອບຄົວ, ການຂູດຮີດທາງເພດ ແລະ ການປະຕິບັດທີ່ເປັນອັນຕະລາຍອື່ນໆເຊັ່ນ:ການແຕ່ງງານ ແລະ ການຖືພາກ່ອນໄວອັນຄວນ.

ດ້ວຍເຫດນີ້, ຈຶ່ງມີຄວາມຈຳເປັນໃນການປັບປຸງຂອບວຽກນະໂຍບາຍຂອງລັດຖະບານໃຫ້ສອດຄ່ອງກັບພັນທະ ແລະ ມາດຕະຖານສາກົນ, ສ້າງຄູ່ມືແນະນຳທີ່ລະອຽດໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງເພື່ອສະໜອງການບໍລິການທີ່ມີການປະສານງານຢ່າງມີຄຸນນະພາບໃນການຊ່ວຍເຫລືອຜູ້ລອດຊີວິດຈາກຄວາມຮຸນແຮງບົນພື້ນຖານທາງເພດ ແລະ ປັບປຸງການຄຸ້ມຄອງຂອດການປະສານງານ.

ພາຍໃຕ້ໂຄງການຮ່ວມມືທີ່ສະໜັບສະໜູນຈາກອົງການ KOICA, UNDP ແລະ UNFPA ຈະສະໜັບສະໜູນ ລັດຖະບານໃນການປະຕິບັດຕາມພັນທະສັນຍາສາກົນ ໃນການປ້ອງກັນ ແລະ ແກ້ໄຂ ຄວາມຮຸນແຮງບົນພື້ນຖານທາງເພດ, ລວມທັງສົນທິສັນຍາ ວ່າດ້ວຍການລຶບລ້າງທຸກຮູບການ ຈຳແນກຕໍ່ແມ່ຍິງ (CEDAW) ຊຶ່ງສອດຄ່ອງກັບຍຸດທະສາດຄວາມສະເໝີ ພາບລະຫວ່າງຍິງ-ຊາຍ ໄລຍະ 2016-2020 ຂອງອົງການ KOICA ແລະ ການຕອບໂຕ້ ແລະ ຟື້ນຟູຈາກການແຜ່ລະບາດຂອງພະຍາດ COVID-19.

## ສັງລວມຫຍໍ້ໂຄງການ

| | |
|---|---|
| **ໄລຍະເວລາ:** | 2020-2024 (48 ເດືອນ) |
| **ພື້ນທີ່ກອມລວມ:** | ລະດັບຊາດ ແລະ ແຂວງ (ຕາມແຂວງທີ່ຄັດເລືອກ) |
| **ຂົງເຂດການເຮັດວຽກ:** | ສາທາລະນະສຸກ, ສັງຄົມ, ຍຸຕິທຳ ແລະ ຕຳຫຼວດ, ແລະ ຂະແໜງການປົກຄອງ. |
| **ຄູ່ຮ່ວມງານໃນການຈັດຕັ້ງປະຕິບັດ:** | ສູນກາງສະຫະພັນແມ່ຍິງລາວ (ສສຍລ) ແລະ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ - ແມ່ ແລະ ເດັກ (ຄຊກມດ) |
| **ສະໜັບສະໜູນໂດຍ:** | ອົງການ KOICA, UNDP ແລະ UNFPA ໂດຍການຮ່ວມມືກັບ PMC (KDS & Tacteen Naeil), ບັນດາອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງທາງສັງຄົມ. |
| **ຜູ້ໃຫ້ທຶນ:** | ອົງການ KOICA: 2.7 ລ້ານ ໂດລາສະຫະລັດ (1.6 ລ້ານໂດລາສະຫະລັດໂດຍຜ່ານ UNDP, 1.1 ລ້ານໂດລາສະຫະລັດໂດຍຜ່ານ UNFPA) |













# ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ

**ແລະ ເຊື່ອມສານບົດບາດຍິງ-ຊາຍເຂົ້າໃນແຜນພັດທະນາແຫ່ງຊາດຂອງ ສປປ ລາວ**

(ໂຄງການຄັນຣົມ)

## ເປົ້າໝາຍເພື່ອໃຫ້ບັນລຸໂຄງການແມ່ນຫຍັງ?

### ການປ້ອງກັນ:

ສ້າງຄວາມເຂັ້ມແຂງດ້ານນະໂຍບາຍແຫ່ງຊາດ ແລະ ຂອບແຜນວຽກຂອງອົງການເພື່ອປ້ອງກັນ ແລະ ເພີ່ມທະວີການປົກປ້ອງ ຕໍ່ແມ່ຍິງ ແລະ ເດັກຍິງ ຈາກຄວາມຮຸນແຮງ (VAWG).

### ການແກ້ໄຂ:

ເພີ່ມຂີດຄວາມສາມາດ ແລະ ການປະສານງານຂອງ ຂະແໜງສັງຄົມ, ສາທາລະນະສຸກ, ຍຸຕິທຳ, ອົງການຫຼັກໃນລະດັບຊາດ ແລະ ລະດັບແຂວງ ໂດຍເພີ່ມການເຂົ້າເຖິງຂອງແມ່ຍິງ ແລະ ເດັກຍິງທີ່ລອດຊີວິດຈາກການໃຊ້ຄວາມຮຸນແຮງໃຫ້ໄດ້ຮັບການບໍລິການທີ່ມີການປະສານງານກັນຢ່າງມີຄຸນນະພາບ.

### ການມີສ່ວນຮ່ວມ:

ການມີສ່ວນຮ່ວມ ແລະ ການເຂົ້າຮ່ວມຂອງຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດເຂົ້າໃນການປຶກສາຫາລືດ້ານນະໂຍບາຍຕ່າງໆເພື່ອຮັບປະກັນການເອົາຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງເປັນໃຈກາງ ແລະ ອີງໃສ່ສິດທິມະນຸດ.








## ຈະເຮັດແນວໃດໃຫ້ບັນລຸເປົ້າໝາຍໂຄງການ?

### ອົງການສະຫະປະຊາຊາດກອງທຶນ ສຳລັບປະຊາກອນ (UNFPA)

1. ໃຫ້ການສະໜັບສະໜູນດ້ານວິຊາການ ໃນການສ້າງ ແລະ ຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດ ເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຄັ້ງທີ II (2021-2025).
2. ໃຫ້ການສະໜັບສະໜູນດ້ານວິຊາການ ໃນການສ້າງ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ເພື່ອຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ຫ້າປີ ຄັ້ງທີ IV (2021-2025).
3. ເຊື່ອມສານແຜນດຳເນີນງານແຫ່ງຊາດເພື່ອຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 9 (2021-2025) ແລະ ແຜນງານຂອງຂະແໜງ ການຕ່າງໆຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ.
4. ສ້າງຄູ່ມືແນະນຳແຫ່ງຊາດທີ່ກວມລວມ ແລະ ຄົບຖ້ວນໃນດ້ານມາດຕະຖານຂອງຂັ້ນຕອນ ແລະ ການດຳເນີນງານ ເພື່ອປ້ອງກັນ ແລະ ແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຂອງຂະແໜງ ສາທາລະນະສຸກ ແລະ ສັງຄົມ.

### ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP)

1. ສ້າງເວທີການສົນທະນາດ້ານນະໂຍບາຍກັບຄູ່ຮ່ວມງານຫຼັກທີ່ກ່ຽວຂ້ອງ ເພື່ອຮັບປະກັນວ່າປະສົບການທີ່ຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງແມ່ນໄດ້ຮັບຄວາມເຄົາລົບ ແລະ ພິຈາລະນາ.
2. ປູກຈິດສຳນຶກໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງກັບຂະແໜງຍຸຕິທຳ ແລະ ຕຳຫຼວດ ກ່ຽວກັບ ບົດບາດຍິງ - ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າໃນການປ້ອງກັນ ແລະ ແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.
3. ດຳເນີນການຄົ້ນຄວ້າ ແລະ ສຳຫຼວດ ເພື່ອສະໜອງ ການເກັບກຳຂໍ້ມູນ, ການຕິດຕາມກວດກາ ແລະ ລາຍງານຄວາມຄືບໜ້າຂອງ ສປປ ລາວ.
4. ຈັດກອງປະຊຸມລະດັບສາກົນ ແລະ ແລກປ່ຽນບົດຮຽນກັບບັນດາຊ່ຽວຊານຈາກ ສ. ເກົາຫຼີ ແລະ ປະເທດເພື່ອນບ້ານ.

**ຂໍ້ມູນເພີ່ມເຕີມຕິດຕໍ່:**
**ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ຖະໜົນລ້ານຊ້າງ ຕູ້ ປ.ນ 345 ວຽງຈັນ, ສປປ ລາວ | Email: info.la@undp.org| ໂທລະສັບ: +856 (0) 21 267 777**
**ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ(UNFPA) ຖະໜົນລ້ານຊ້າງ ຕູ້ ປ.ນ 345 ວຽງຈັນ, ສປປ ລາວ | Email: vorabouth@unfpa.org | ໂທລະສັບ: 856 (0) 21 267718**